ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ: 571 /ກຄທ
ນະຄອນຫຼວງວຽງຈັນ, ວັນທີ 19 ຕຸລາ 2021

# ແຈ້ງການແນະນຳ
# ການຈັດຕັ້ງປະຕິບັດຂໍ້ຕົກລົງ ວ່າດ້ວຍບັນຊີທີ່ບໍ່ມີການເຄື່ອນໄຫວ

- ອີງຕາມຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 955/ທຫລ, ລົງວັນທີ 7 ພະຈິກ 2013;
- ອີງຕາມຂໍ້ຕົກລົງ ວ່າດ້ວຍບັນຊີທີ່ບໍ່ມີການເຄື່ອນໄຫວ ສະບັບເລກທີ 1190/ທຫລ, ລົງວັນທີ 30 ທັນວາ 2019;
- ອີງຕາມບົດແນະນຳການຈັດຕັ້ງປະຕິບັດຂໍ້ຕົກລົງ ວ່າດ້ວຍວ່າດ້ວຍບັນຊີທີ່ບໍ່ມີການເຄື່ອນໄຫວ ເລກທີ 525/ກຄທ, ລົງວັນທີ 11 ກັນຍາ 2020.

ເພື່ອຮັບປະກັນຄວາມເປັນເອກະພາບຂອງທະນາຄານທຸລະກິດທົ່ວລະບົບ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງ ວ່າດ້ວຍບັນຊີທີ່ບໍ່ມີການເຄື່ອນໄຫວ ສະບັບເລກທີ 1190/ທຫລ, ລົງວັນທີ 30 ທັນວາ 2019 ຊຶ່ງຕໍ່ໄປນີ້ເອີ້ນວ່າ "ຂໍ້ຕົກລົງ".

## ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ ອອກແຈ້ງການແນະນຳ ດັ່ງນີ້:

1. ກໍລະນີລູກຄ້າມີບັນຊີເງິນຝາກ 2 ບັນຊີຂຶ້ນໄປໃນທະນາຄານດຽວກັນ ຫາກບັນຊີໃດໜຶ່ງ ຍັງມີທຸລະກຳທີ່ປະຕິບັດໂດຍເຈົ້າຂອງບັນຊີ ຫຼື ມີການຕິດຕໍ່ພົວພັນກັບທະນາຄານ ແມ່ນໃຫ້ຖືວ່າບັນຊີເງິນຝາກທັງໝົດຂອງລູກຄ້າດັ່ງກ່າວເປັນບັນຊີທີ່ມີການເຄື່ອນໄຫວປົກກະຕິ. ຍົກເວັ້ນບັນຊີເງິນຝາກຮ່ວມ (ເຈົ້າຂອງບັນຊີຫຼາຍກວ່າ 1 ຄົນ), ເຖິງວ່າເຈົ້າຂອງບັນຊີຮ່ວມຄົນໃດໜຶ່ງ ມີການເຄື່ອນໄຫວບັນຊີບັນຊີອື່ນຂອງຕົນກໍຕາມ ແຕ່ຖ້າບໍ່ແມ່ນການເຄື່ອນໄຫວບັນຊີຮ່ວມດັ່ງກ່າວ ກໍຖືວ່າບັນຊີຮ່ວມນັ້ນ ບໍ່ມີການເຄື່ອນໄຫວ;
2. ການຕິດຕໍ່ຫາເຈົ້າຂອງບັນຊີ ຕາມທີ່ກຳນົດໃນມາດຕາ 5 ຂອງຂໍ້ຕົກລົງ, ທະນາຄານ ຕ້ອງມີການບັນທຶກວ່າ ສາມາດຕິດຕໍ່ຫາລູກຄ້າໄດ້ ຫຼື ບໍ່. ໃນນີ້, ກ່ອນບັນຊີເງິນຝາກກາຍເປັນບັນຊີທີ່ບໍ່ມີການເຄື່ອນໄຫວ ເມື່ອທະນາຄານ ສາມາດຕິດຕໍ່ຫາເຈົ້າຂອງບັນຊີໄດ້ ຖ້າລູກຄ້າຕ້ອງການຮັກສາບັນຊີຕໍ່ໄປ ແມ່ນໃຫ້ຖືວ່າບັນຊີດັ່ງກ່າວມີການເຄື່ອນໄຫວ;
3. ບັນຊີເງິນຝາກທີ່ບໍ່ມີການເຄື່ອນໄຫວ 1 ປີຂຶ້ນໄປ ແຕ່ບໍ່ຮອດ 6 ປີ ກ່ອນຂໍ້ຕົກລົງມີຜົນສັກສິດ ຕາມທີ່ກຳນົດໃນມາດຕາ 15 ຂອງຂໍ້ຕົກລົງ ແມ່ນໃຫ້ທະນາຄານ ຈັດບັນຊີເງິນຝາກດັ່ງກ່າວ ເປັນບັນຊີເງິນຝາກທີ່ບໍ່ມີການເຄື່ອນໄຫວ ພ້ອມທັງສືບຕໍ່ຮັກສາໄວ້ຢູ່ທະນາຄານອີກ 5 ປີ ເມື່ອຄົບກຳນົດເວລາດັ່ງກ່າວຈຶ່ງປິດ ແລະ ໂອນມາຍັງ ທຫລ;
4. ບັນຊີເງິນຝາກທີ່ບໍ່ມີການເຄື່ອນໄຫວ 6 ປີຂຶ້ນໄປ ກ່ອນຂໍ້ຕົກລົງມີຜົນສັກສິດ ຕາມທີ່ກຳນົດໃນມາດຕາ 15 ຂອງຂໍ້ຕົກລົງ, ທະນາຄານ ຕ້ອງບັນທຶກບັນຊີດັ່ງກ່າວໄວ້ໃນຫົວບັນຊີເງິນຝາກທີ່ບໍ່ມີການເຄື່ອນໄຫວ ກ່ອນການປິດ ແລະ ໂອນມາຍັງ ທຫລ ຕາມທີ່ກຳນົດໃນຂໍ້ 2 ຂອງບົດແນະນຳການຈັດຕັ້ງປະຕິບັດ ເລກທີ 525/ກຄທ;

5. ການບັນທຶກບັນຊີເງິນຝາກຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ກາຍເປັນບັນຊີທີ່ບໍ່ມີການເຄື່ອນໄຫວ ແມ່ນໃຫ້ບັນທຶກຕາມເລກໝາຍບັນຊີ ທີ່ກຳນົດໃນແຈ້ງການເລກທີ 206/ກບງ, ລົງວັນທີ 23 ມີນາ 2021;
6. ການລາຍງານ ກ່ຽວກັບຂໍ້ມູນບັນຊີທີ່ບໍ່ມີການເຄື່ອນໄຫວ ມາຍັງ ກຄທ ຕາມທີ່ກຳນົດໄວ້ໃນຂໍ້ 3.1 ຂອງບົດແນະນຳຈັດຕັ້ງປະຕິບັດ ເລກທີ 525/ກຄທ, ລົງວັນທີ 11 ກັນຍາ 2020 ແມ່ນໃຫ້ປ່ຽນຈາກການລາຍງານເປັນແຕ່ລະເດືອນ ມາເປັນ ລາຍງານເປັນແຕ່ລະໄຕມາດ;
7. ການໂອນເງິນຈາກບັນຊີທີ່ບໍ່ມີການເຄື່ອນໄຫວທີ່ຖືກປິດ ມາຍັງ ທຫລ ແມ່ນບໍ່ຕ້ອງຂໍອະນຸຍາດຈາກ ກຄທ ຕາມທີ່ກຳນົດໃນຂໍ້ 2.2 ຂອງບົດແນະນຳຈັດຕັ້ງປະຕິບັດ ເລກທີ 525/ກຄທ, ລົງວັນທີ 11 ກັນຍາ 2020 ແຕ່ທະນາຄານຕ້ອງສັງລວມລາຍງານເປັນແຕ່ລະໄຕມາດ ມາຍັງ ກຄທ ກ່ຽວກັບການໂອນດັ່ງກ່າວ ຕາມແບບພິມລາຍງານໃນຂໍ້ 3.2 ຂອງບົດແນະນຳຈັດຕັ້ງປະຕິບັດ ເລກທີ 525/ກຄທ, ລົງວັນທີ 11 ກັນຍາ 2020.

ດັ່ງນັ້ນ, ຈຶ່ງອອກແຈ້ງການແນະນຳສະບັບນີ້ ເພື່ອຈັດຕັ້ງປະຕິບັດໃຫ້ເປັນເອກະພາບ.

**ຫົວໜ້າກົມ**

ທະນາຄານແຫ່ງ ສ. ປ. ປ. ລາວ ★ ກົມຄຸ້ມຄອງທະນາຄານ

ອາລຸນ ບຸນຍົງ